ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

**ຜ-ຟຟລ ໄດ້ມອບ ອຸປະກອນການສຶກສາ ແກ່ໂຮງຮຽນຫ່າງໄກສອກຫຼີກ ພາຍໃຕ້ໂຄງການ "ຮັກນີ້ແດ່ພີ່ນ້ອງ ປີ3"**

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ຫຼື ຜ-ຟຟລ ໄດ້ມອບ ອຸປະກອນການສຶກສາ ແລະ ກິລາ ພ້ອມດ້ວຍເຄື່ອງອຸປະໂພກ ບໍລິໂພກຈຳນວນໜຶ່ງ ໃຫ້ກັບນ້ອງໆນັກຮຽນ ແລະ ຄູອາຈານ ທີ່ ໂຮງຮຽນປະຖົມບ້ານໜອງຄຳ, ເມືອງໂພນໄຊ ແຂວງຫຼວງພະບາງ ພາຍໃຕ້ໂຄງການ "ຮັກນີ້ແດ່ພີ່ນ້ອງ ປີ3", ໂດຍພິທີ ມອບ-ຮັບ ເຄື່ອງດັ່ງກ່າວ ໄດ້ຈັດຂຶ້ນຢ່າງເປັນທາງການ ໃນວັນທີ 06 ມິຖຸນາ 2019.

ອຸປະກອນ ແລະ ເຄື່ອງໃຊ້ຕ່າງໆ ທີ່ນຳມາມອບໃນຄັ້ງນີ້ ແມ່ນໄດ້ຈາກ ການລະດົມທຶນກັບບັນດາ ພະນັກງານ 3 ອົງການຈັດຕັ້ງມະຫາຊົນ ຂອງ ຜ-ຟຟລ ຈາກບັນດາເຂື່ອນຕ່າງໆ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງ ຜ-ຟຟລ ຈາກການປະກາດຮ່ວມບໍລິຈາກ ຜ່ານທາງ ເວບໄຊ ແລະ ຈາກພາກສ່ວນຕ່າງໆ ທີ່ມີນ້ຳໃຈໃນການແບ່ງປັນວັດຖຸປັດໄຈສ່ວນຕົວ ເພື່ອສົ່ງເສີມວຽກງານດ້ານການສຶກສາເພື່ອຊ່ວຍເຫຼືອນ້ອງໆ ເຊິ່ງລວມມີ ໂຕະຕັ່ງຄູ 4 ຊຸດ, ຕູ້ໃສ່ເອກະສານຄູ 3 ໜ່ວຍ, ຊຸດໂຕະຕັ່ງນັກຮຽນ 30 ຊຸດ,ກະດານດຳ ຈຳນວນ 5 ຊຸດ, ອຸປະກອນການຮຽນການສອນ ໃຫ້ແກ່ອາຈານ ແລະ ນັກຮຽນ ເປັນຕົ້ນແມ່ນ ປຶ້ມ, ບິກ, ສໍ, ຖົງ ແລະ ອື່ນໆ, ພ້ອມທັງເຄື່ອງນຸ່ງຫົ່ມໃຫ້ແກ່ ນັກຮຽນ ແລະ ອາຈານ, ອຸປະກອນກິລາ ແລະ ເຄື່ອງທີ່ໄດ້ຮັບບໍລິຈາກ ຈຳນວນໜຶ່ງ ລວມເປັນມູນຄ່າ ຫຼາຍກວ່າ 45 ລ້ານກີບ.

ເຂົ້າຮ່ວມ ໃນພິທີມອບຮັບຄັ້ງນີ້ມີບັນດາການນຳຈາກ ຜ-ຟຟລ, ນຳໂດຍ ທ່ານນາງ ລັດຕະນາ ປະທຸມວັນ ຜູ້ອຳນວຍການໃຫຍ່ ຜ-ຟຟລ, ທ່ານ ອ່ອນສີ ຈ່າເພຍວ່າ ຮອງເຈົ້າເມືອງ ເມືອງ ໂພນໄຊ ພ້ອມດ້ວຍອ□ານາດການປົກຄອງທ້ອງຖິ່ນ. ໃນໂອກາດດຽວກັນນີ້ ຍັງໄດ້ມີການຮ່ວມປູກຕົ້ນໄມ້ໃນບໍລິເວນເດີ່ນໂຮງຮຽນ ເພື່ອເປັນສັນຍາລັກແຫ່ງການຮ່ວມມື ແລະ ເປັນຮົ່ມໃຫ້ແກ່ນ້ອງນັກຮຽນ ຄູອາຈານ ໃນບໍລິເວນດັ່ງກ່າວອີກດ້ວຍ.







ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ,ເມືອງສີສັດຕະນາກ,ນະຄອນຫຼວງວຽງຈັນ, ສປປລາວ. ຕູ້ປ. ນ. 2392
ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la,ເວັໄຊທ໌:www.edlgen.com.la